ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສະຫະພັນແມ່ຍິງຮາກຖານ ທຫລ ປະກອບສ່ວນມອບອຸປະກອນການແພດ ປ້ອງກັນພະຍາດໂຄວິດ 19 ໃຫ້ແກ່ໂຮງໝໍເມືອງສັງທອງ




ເພື່ອເປັນການສ້າງຂະບວນການຂໍ່ານັບຊົມເຊີຍວັນແມ່ຍິງສາກົນ ຄົບຮອບ 112 ປີ ຄື ວັນທີ 8 ມີນາ ຜ່ານມາ ແລະ ເພື່ອເປັນການປະກອບສ່ວນຊ່ວຍເຫຼືອສັງຄົມ ໃນການປ້ອງກັນພະຍາດໂຄວິດ 19 ໃນຕອນເຊົ້າວັນທີ 16 ມີນາ 2022 ນີ້ ສະຫະພັນຮາກຖານທະນາຄານ ແຫ່ງ ສປປລາວ (ທຫລ) ໄດ້ນໍາເອົາເຄື່ອງອຸປະກອນການແພດເພື່ອປ້ອງກັນພະຍາດໂຄວິດ 19 ຈໍານວນໜຶ່ງ ໄປມອບໃຫ້ແກ່ໂຮງໝໍເມືອງສັງທອງ, ນະຄອນຫຼວງວຽງຈັນ; ຕາງໜ້າກ່າວມອບ ໂດຍແມ່ນ ທ່ານ ນ ພຸມມະລີ ສີລິພົນເດດ ຮອງຫົວໜ້າກົມຈັດຕັ້ງແລະພະນັກງານ, ຮອງປະທານສະຫະພັນແມ່ຍິງຮາກຖານ ທຫລ ແລະ ຕາງໜ້າກ່າວຮັບໂດຍແມ່ນທ່ານ ຄອນສະຫວັນ ສິງຫາລາດ ຮອງເລຂາໜ່ວຍພັກ, ຮອງຫົວໜ້າຫ້ອງການສາທາລະນະສຸກເມືອງສັງທອງ ເຊິ່ງມີຄະນະ ແລະ ສະມາຊິກສະຫະພັນແມ່ຍິງຮາກຖານ ທຫລ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງພາຍໃນໂຮງໝໍເມືອງເຂົ້າຮ່ວມ.

ອຸປະກອນທີ່ນໍາໄປມອບໃນເທື່ອນີ້ ປະກອບມີ: ເຄື່ອງວັດແທກອຸນຫະພູມ ພ້ອມເຄື່ອງພົ່ນຂ້າເຊື້ອ ແບບຂາຕັ້ງ, ເຫຼົ້າ 90, ໜ້າກາກອານາໄມ, ຖົງມືຢາງທາງການແພດ, ບາຫຼອດ ດີຈິຕໍອລ, ນໍ້າເກືອສໍາລັບລ້າງບາດ, ຜ້າບັ້ງ, ສໍາລີ, ຂວດໂຫຼແບບຫົວສີດສໍາລັບໃສ່ເຫຼົ້າ 90 ແລະ ປະຕິທິນ ທຫລ ຈໍານວນໜຶ່ງ ລວມມູນຄ່າທັງໝົດ 5 ລ້ານກວ່າກີບ.

ທ່ານ ນ ພູມມະລີ ສີລິພິນເດດ ໄດ້ກ່າວວ່າ:  ເຄື່ອງອຸປະກອນການແພດ ເພື່ອປ້ອງກັນພະຍາດໂຄວິດ 19 ທີ່ນໍາໄປມອບໃຫ້ແກ່ໂຮງໝໍເມືອງສັງທອງໃນເທື່ອນີ້ ແມ່ນໄດ້ມາຈາກການລະດົມປັດໃຈຈາກເອື້ອຍນ້ອງແມ່ຍິງ ແລະ ຄັງຂອງສະຫະພັນແມ່ຍິງຮາກຖານ ທຫລ ພ້ອມທັງການສະໜັບສະໜູນຈາກການຈັດຕັ້ງຂອງ ທຫລ ເຊິ່ງຍາມໃດແມ່ຍິງຂະແໜງການທະນາຄານ ກໍ່ເຫັນໄດ້ເຖິງຄວາມສໍາຄັນຂອງວຽກງານສາທາລະນະສຸກ ທີ່ເຮັດໜ້າທີ່ໃນການປ້ອງກັນ ແລະ ຮັບມືກັບພະຍາດດັ່ງກ່າວ ນັບແຕ່ຕົ້ນປີ 2020 ເປັນຕົ້ນມາ.

ທ່ານ ຄອນສະຫວັນ ສີງຫາລາດ ໄດ້ສະແດງຄວາມຂອບໃຈຕໍ່ ທຫລ ໂດຍສະເພາະສະຫະພັນແມ່ຍິງຮາກຖານ ທຫລ ທີ່ໄດ້ໃຫ້ການຊ່ວຍເຫຼືອ ທາງດ້ານວັດຖຸອຸປະກອນທາງການແພດ ທີ່ໃຊ້ເຂົ້າໃນວຽກງານປ້ອງກັນພະຍາດໂຄວິດ 19  ເຊິ່ງເປັນອຸປະກອນທີ່ຈໍາເປັນ ທີ່ໃຊ້ເຂົ້າໃນການປະຕິບັດໜ້າທີ່ຂອງແພດໝໍ ເຊິ່ງເປັນເຄື່ອງທີ່ໂຮງໝໍເມືອງສັງທອງກໍາລັງຕ້ອງການເປັນຢ່າງຍິ່ງ.





***# ພາບ-ຂ່າວ:  ສົມອິກ ເຄນຄໍາແພງ***

*ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນລາວ*